**ມິຊຊາອາທິດທີ 1 ກຳນົດບຳເພັນສິນປີ A**

**ວັນທີ 1 ມີນາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 4, 1-11**

ໃນເວລານັ້ນ, ພຣະຈິດເຈົ້າໄດ້ພາພຣະເຢຊູເຈົ້າເຂົ້າທີ່ປ່ງວເພື່ອໃຫ້ຜີປີສາດມາຫລອກລວງ. ເມື່ອໄດ້ຊົງອົດອາຫານເປັນເວລາ 40 ມື້ 40 ຄືນແລ້ວ, ພຣະອົງກໍຮູ້ສຶກຫິວ, ແລະຜີປີສາດກໍເຂົ້າມາທູນພຣະອົງວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວ ຈົ່ງສັ່ງບອກໃຫ້ກ້ອນຫີນເຫລົ່ານີ້ກາຍເປັນເຂົ້າຈີ່ເຖີດ. ພຣະອົງຊົງຕອບວ່າ: ພຣະຄຳພີໄດ້ກ່າວວ່າ: ມະນຸດມີຊີວິດຢູ່ໄດ້ບໍ່ແມ່ນຍ້ອນເຂົ້າຈີ່ເທົ່ານັ້ນ, ແຕ່ຍັງແມ່ນຍ້ອນວາຈາທີ່ພຣະເຈົ້າກ່າວອອກມາອີກດ້ວຍ. ແລ້ວຜີປີສາດກໍພາພຣະອົງໄປນະຄອນສັກສິດ, ໃຫ້ພຣະອົງປະທັບຢູ່ຈອມວິຫານແລະເວົ້າວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວກໍໃຫ້ໂຕນລົງລຸ່ມເຖີດ. ຍ້ອນພຣະຄຳພີໄດ້ກ່າວວ່າ: ພຣະອົງຈະສັ່ງເທວະດາຂອງພຣະອົງມາອູ້ມຊູເຈົ້າໄວ້ ບໍ່ໃຫ້ຕີນເຈົ້າຕຳກ້ອນຫີນ. ພຣະເຢຊູເຈົ້າກ່າວຕອບວ່າ: ພຣະຄຳພີກໍຍັງໄດ້ກ່າວອີກວ່າ: ເຈົ້າບໍ່ຕ້ອງມາຫລອກລວງພຣະເຈົ້າຂອງເຈົ້າ. ຜີປີສາດຍັງໄດ້ພາພຣະອົງຂຶ້ນພູສູງທີ່ສຸດໜ່ວຍໜຶ່ງ ແລ້ວສຳແດງອານາຈັກຕ່າງໆຂອງໂລກ ພ້ອມກັບຄວາມສີວິໄລທຸກຢ່າງໃຫ້ພຣະອົງເຫັນແລ້ວເວົ້າວ່າ: ເຮົາຈະໃຫ້ທ່ານໝົດທຸກສິ່ງເຫລົ່ານີ້ ຖ້າຫາກວ່າທ່ານຂາບລົງນົບໄຫວ້ເຮົາ. ພຣະເຢຊູເຈົ້າຕອບວ່າ: ຊາຕານ ຈົ່ງໜີອອກໄປ. ຍ້ອນພຣະຄຳພີໄດ້ຂຽນໄວ້ວ່າ: ເຈົ້າຕ້ອງນົບໄຫວ້ພຣະເຈົ້າຂອງເຈົ້າ ແລະຮັບໃຊ້ພຣະອົງແຕ່ຜູ້ດຽວເທົ່ານັ້ນ. ຜີປີສາດເລີຍປະພຣະອົງໄປ. ພວກເທວະດາຈຶ່ງພາກັນມາຮັບໃຊ້ພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 4, 1-11**

ພວກເຮົາໄດ້ກ້າວເຂົ້າສູ່ກໍານົດບໍາເພັນສິນພ້ອມກັບພຣະກຣິສຕະຈັກພາຍໃຕ້ການນໍາພາຂອງພຣະຈິດເຈົ້າຕັ້ງແຕ່ວັນພຸດຮັບເທົ່າທີ່ຜ່ານມາ. ວັນນີ້, ພວກເຮົາກໍພ້ອມກັບພຣະເຢຊູເຈົ້າເຂົ້າໃນທີ່ປ່ຽວພາຍໃຕ້ການນໍາພາຂອງພຣະຈິດເຈົ້າເພື່ອປະເຊີນໜ້າກັບການປະຈົນຫລອກລວງຈາກຜີປີສາດ. ເມື່ອໄດ້ຍິນຄໍາວ່າ: "ການປະຈົນຫລອກລວງ" ພວກເຮົາມັກຈະມີຄວາມຢ້ານກົວ. ແນ່ນອນ, ການປະຈົນຫລອກລວງຈະເປັນສິ່ງໜ້າຢ້ານກົວແລະທໍາໃຫ້ພວກເຮົາຕົກໃນບາບໄດ້ ຖ້າພວກເຮົາບໍ່ເພິ່ງອີງພຣະເຈົ້າ ແລະເຊື່ອໝັ້ນໃນວາຈາຂອງພຣະອົງ.

ໃນບົດອ່ານທີໜຶ່ງຂອງວັນນີ້, ພຣະກຣິສຕະຈັກໄດ້ໃຫ້ພວກເຮົາຟັງແລະລໍາເພິງເຖິງເຫດການຊຶ່ງນາງເອວາຖືກງູຫລອກລວງໃນສວນສະຫວັນ. ເຫດການນີ້ໄດ້ເລີ່ມຕົ້ນດ້ວຍການສົນທະນາລະຫວ່າງງູກັບນາງເອວາ. ງູໄດ້ໃຊ້ຄໍາເວົ້າທີ່ກົງກັນຂ້າມກັບວາຈາພຣະເຈົ້າເພື່ອຫລອກລວງນາງເອວາໂດຍກ່າວວ່າ: *"ແມ່ນແທ້ບໍວ່າ, ພຣະເຈົ້າຫ້າມພວກເຈົ້າບໍ່ໃຫ້ກິນໝາກໄມ້ທຸກຢ່າງໃນສວນສະຫວັນນີ້?"*. ແນ່ນອນ, ພວກເຮົາຮູ້ຈັກຄໍາເວົ້າຂອງພຣະເຈົ້າທີ່ກ່າວກັບອາດາມວ່າ: *"ພວກເຈົ້າສາມາດກິນໝາກໄມ້ທຸກຊະນິດໃນສວນນີ້ໄດ້ ຍົກເວັ້ນຕົ້ນໄມ້ທີ່ທໍາໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ ຍ້ອນວ່າເມື່ອກິນໝາກໄມ້ນີ້ແລ້ວພວກເຈົ້າຈະຮູ້ຈັກຄວາມຕາຍ"* (ປຖກ 2, 16-17). ແຕ່ງູເວົ້າກົງກັນຂ້າມກັບວາຈາພຣະເຈົ້າອີກວ່າ: *"ພວກເຈົ້າຈະບໍ່ຕາຍດອກ.."*. ສຸດທ້າຍ, ນາງເອວາກໍຕົກຢູ່ໃນການຫລອກລວງຂອງງູຍ້ອນນາງບໍ່ເຊື່ອຟັງວາຈາພຣະເຈົ້າ. ບົດເລື່ອງນີ້ຢາກສອນພວກເຮົາຫຍັງ? ມີສິ່ງໜຶ່ງທີ່ພວກເຮົາສາມາດຖອດຖອນເປັນບົດຮຽນໄດ້ນັ້ນຄື ວາຈາພຣະເຈົ້າເປັນວາຈາແຫ່ງຄວາມຈິງແລະຊີວິດ. ສ່ວນຄໍາເວົ້າຂອງຜີປີສາດເປັນຄໍາເທັດບໍ່ຈິງຊຶ່ງຈະທໍາໃຫ້ພວກເຮົາຕົກຢູ່ໃນບາບອັນເປັນທີ່ມາຂອງຄວາມຕາຍ. ຍ້ອນອາດາມແລະເອວາບໍ່ເຊື່ອຟັງວາຈາພຣະເຈົ້າຈຶ່ງຕົກຢູ່ໃນບາບ. ພຣະເຢຊູເຈົ້າ, ປຽບເໝືອນອາດາມຄົນໃໝ່ໄດ້ເຊື່ອໝັ້ນໃນວາຈາຂອງ ພຣະບິດາດັ່ງທີ່ພວກເຮົາໄດ້ຟັງໃນພຣະວໍລະສານວັນນີ້.

ໃນທີ່ປ່ຽວ, ຜີປີສາດກໍໃຊ້ວິທີດຽວຄືການກ່າວຄໍາເທັດກົງກັນຂ້າມກັບຄວາມຈິງກ່ຽວກັບພຣະບຸກຄົນຂອງພຣະເຢຊູເຈົ້າ. ຜີປີສາດທູນພຣະເຢຊູເຈົ້າວ່າ: *" ຖ້າທ່ານແມ່ນບຸດຂອງພຣະເຈົ້າ..."*. ໃນພຣະວໍລະສານ, ນອກຈາກພວກລູກສິດ, ພວກຟາຣີເຊວແລະຝູງຊົນ, ມີຜູ້ໜຶ່ງທີ່ຮູ້ຈັກວ່າພຣະເຢຊູແມ່ນພຣະບຸດພຣະເຈົ້ານັ້ນຄືຜີປີສາດ. ແຕ່ຜີປີສາດພັດເວົ້າກົງກັນຂ້າມກັບຄວາມຈິງເພື່ອຫລອກລວງພຣະເຢຊູເຈົ້າ. ແທນທີ່ພຣະອົງຈະຕອບຜີປີສາດໂດຍຕົງວ່າ: ແມ່ນແທ້, ເຮົາແມ່ນພຣະບຸດພຣະເຈົ້າ. ພຣະອົງພັດໃຊ້ວາຈາພຣະເຈົ້າເພື່ອຕອບຄືນຜີປີສາດ. ໃນທີ່ສຸດ, ຜີປີສາດກໍຍອມແພ້ແລະໜີໄປ. ສິ່ງນີ້ຢາກສອນພວກເຮົາຫຍັງ? ສິ່ງທໍາອິດທີ່ຢາກສອນພວກເຮົາຄື: ບໍ່ມີມານຮ້າຍໃດໃນໂລກນີ້, ບໍ່ມີຄວາມເທັດໃດໃນຊີວິດນີ້ສາມາດຊະນະວາຈາພຣະເຈົ້າອັນເປັນວາຈາແຫ່ງຄວາມຈິງແລະຊີວິດໄດ້. ສິ່ງທີສອງທີ່ພວກເຮົາສາມາດຖອດຖອນເປັນບົດຮຽນໄດ້ນັ້ນຄືພຣະເຢຊູເຈົ້າຜູ້ຊຶ່ງພວກເຮົາເຊື່ອໄດ້ຊະນະຜີປີສາດ, ການປະຈົນຫລອກລວງແລ້ວ. ຖ້າພວກເຮົາຢາກຊະນະການປະຈົນຫລອກລວງແລະສິ່ງຊົ່ວຮ້າຍທັງຫລາຍໃຫ້ພວກເຮົາເຊື່ອແລະໄວ້ວາງໃຈໃນພຣະເຢຊູເຈົ້າ. ສິ່ງສຸດທ້າຍຊຶ່ງພວກເຮົາຮຽນຮູ້ໄດ້ນັ້ນຄື ບໍ່ວ່າໃນການປະຈົນຫລອກລວງ, ໃນຄວາມຫຍຸ້ງຍາກ, ໃນເຫດການໃດກໍຕາມທີ່ເກີດເປັນມາໃນຊີວິດພວກເຮົາ, ພວກເຮົາບໍ່ໄດ້ປະເຊີນໜ້າກັບສິ່ງນັ້ນຜູ້ດຽວ ແຕ່ພວກເຮົາມີພຣະຈິດເຈົ້າຜູ້ເປັນພະລະກໍາລັງຢູ່ຄຽງຂ້າງພວກເຮົາສະເໝີ. ດັ່ງທີ່ພຣະຈິດເຈົ້າໄດ້ຢູ່ກັບພຣະເຢຊູເຈົ້າໃນທີ່ປ່ຽວຕໍ່ໜ້າການປະຈົນຫລອກລວງຂອງຜີປີສາດ.

ຂໍໃຫ້ພວກເຮົາໃຊ້ຊີວິດໃນກໍານົດບໍາເພັນສິນນີ້ດ້ວຍຄວາມເຊື່ອໝັ້ນແລະຄວາມຫວັງໄວ້ໃຈໃນອົງພຣະເຢຊູຜູ້ເປັນພຣະວາຈານາດຂອງພຣະເຈົ້ານັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ